# ຢຸດຕິຄວາມຮຸນແຮງຕໍ່ແມ່ຍິງ – ຂໍຮຽກຮ້ອງຄວາມຮ່ວມມື ຈາກຜູ້ຊາຍທຸກຄົນ

*ທ່ານ ຈອນ ວິນລຽມສ໌ ເອກອັກຄະລັດຖະທູດ ອິດສະຕຣາລີ ປະຈໍາ ສປປ ລາວ*

*"ມັນແມ່ນການທີ່ ຜູ້ຊາຍ ນໍາເອົາຂໍ້ມູນ ດ້ານຄວາມສະເໝີພາບຍິງຊາຍ ບອກຕໍ່ ໃຫ້ແກ່ຜູ້ຊາຍຄົນອື່ນໆ ຈຶ່ງຈະຊ່ວຍ ປ່ຽນແປງ ແນວຄວາມຄິດ ດ້ານຄວາມສະເໝີພາບຍິງຊາຍ."*

ມື້ນີ້, ວັນທີ 25 ພະຈິກ, ຢູ່ທົ່ວໂລກ ໄດ້ລະລຶກເຖິງ ວັນ ໂບສີຂາວ - ຊຶ່ງເປັນວັນສາກົນ ໃນການ ຢຸດຕິ ຄວາມຮຸນແຮງຕໍ່ແມ່ຍິງ.

ມັນເປັນ ມື້ທີ່ ຖະແຫຼງ 16 ວັນ ທີ່ທົ່ວໂລກໄດ້ພ້ອມກັນ ມີສ່ວນຮ່ວມ ໃນການຕໍ່ຕ້ານ ແລະ ຢຸດຕິ ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ - ເຊິ່ງ ເປັນໜຶ່ງ ໃນການທາລຸນ ທາງດ້ານສິດທິມະນຸດ ທີ່ຍອມຮັບບໍ່ໄດ້ ແລະ ມີແຜ່ຫຼາຍໃນໂລກນີ້.

ບໍ່ມີປະເທດໃດ, ບໍ່ຊຸມຊົນໃດ ທີ່ປາດສະຈາກ ບັນຫານີ້. ຜົນກະທົບຂອງບັນຫານີ້ ຕໍ່ ການດໍາລົງຊີວິດ ແລະ ການພັດທະນາ ຂອງ ຊຸມຊົນຂອງພວກເຮົາ ແມ່ນໜ້າເປັນຫ່ວງຫຼາຍ.

ຢູ່ທົ່ວໂລກ, ມີຜູ້ຍິງຫຼາຍກວ່າ ໜຶ່ງໃນສາມ ໄດ້ຖືກ ທຸບຕີ, ບັງຄັບໃຫ້ມີເພດສໍາພັນ, ຫຼື ຖືກ ທາລຸນ ໃນດ້ານອື່ນໆ. ສ່ວນໃຫຍ່ແລ້ວ ແມ່ນໄດ້ຖືກກະທໍາໂດຍຄົນທີ່ ນາງຮູ້ຈັກ, ເຊັ່ນ ສາມີຂອງນາງ ຫຼື ຜູ້ຊາຍຄົນອື່ນໆ ທີ່ເປັນສະມາຊິກໃນຄອບຄົວ.

ຢູ່ ປະເທດອົດສະຕຣາລີ, ຜູ້ຍິງຄົນນຶ່ງ ຈະຖືກ ຂ້າ ທຸກໆ ອາທິດ ໂດຍ ຄົນຮັກ ຫຼື ອະດີດຄົນຮັກ – ປະມານ 75 ກໍລະນີ ແຕ່ລະປີ. ຜູ້ຍິງ ໜຶ່ງໃນສາມຄົນ ທີ່ມີອາຍຸຫຼາຍກວ່າ 15 ປີ ໄດ້ມີປະສົບການ ໃນການຖືກທາລຸນ ທາງຮ່າງກາຍ ຫຼື ຄວາມຮຸນແຮງທາງເພດ ຢູ່ໃນບາງຊ່ວງຂອງຊີວິດເຂົາເຈົ້າ.

ຢູ່ໃນ ຜູ້ຍິງ ເກືອບ 1 ຕື້ຄົນ, ໃນນັ້ນ 1.2 ລ້ານ ຄົນຢູ່ ປະເທດ ອົດສະຕຣາລີ, ປະຈຸບັນ ອາດຈະກໍາລັງ ດໍາລົງຊີວິດຢູ່ໃນ ຄວາມສໍາພັນ ທີ່ມີລັກສະນະ ຮຸນແຮງ, ຫຼື ຫາກໍ່ປະເຊີນໜ້າກັບ ຄວາມສໍາພັນໃນລັກສະນະດັ່ງກ່າວ.

ນີ້ໝາຍຄວາມວ່າ ປະຈຸບັນນີ້ ມີຜູ້ຍິງ ອີກຈໍານວນຫຼາຍ ທີ່ ກໍາລັງ ດໍາລົງຊີວິດຢູ່ໃນ ຄວາມສໍາພັນທີ່ມີ ລັກສະນະຮຸນແຮງຫຼາຍກວ່າ ຈໍານວນຄົນທີ່ ຂາດສານອາຫານ ຢູ່ທົ່ວໂລກ.

ໂດຍສະເລ່ຍແລ້ວ ຜູ້ຍິງ ໜຶ່ງໃນຫ້າ ຄົນ ຢູ່ ສປປ ລາວ ແມ່ນຖືກທາລຸນທາງດ້ານຮ່າງກາຍ ຢູ່ພາຍໃນບ້ານ, ນຶ່ງ ໃນສາມ ຄົນ ແມ່ນຖືກທາລຸນທາງດ້ານຈິດໃຈ.

ໂດຍລວມແລ້ວ, ມີຜູ້ຍິງຫຼາຍຄົນ, ທັງຢູ່ ເຂດ ຊົນນະບົດ ແລະ ຕົວເມືອງ, ໄດ້ມີຄວາມຮັບຮູ້ໜ້ອຍກ່ຽວກັບ ສິດທິ ຂອງ ພວກເຂົາ ໃນການຖືກປົກປ້ອງ ຈາກຄວາມຮຸນແຮງດັ່ງກ່າວ.

ແນວຄິດຂອງສັງຄົມ ກໍ່ສາມາດ ນຳພາໄປສູ່ຄວາມ ຮຸນແຮງ ໄດ້ – ເຊັ່ນວ່າ ບາງຄົນຍອມຮັບວ່າຄວາມ ຮຸນແຮງ ພາຍໃນຄອບຄົວ ແມ່ນເປັນເລື່ອງທຳມະດາ.

ການສຳຫຼວດໃນ ປະເທດອິດສະຕຣາລີ ສະແດງໃຫ້ເຫັນ ຄວາມບໍ່ເທົ່າທຽມກັນ ລະຫ່ວາງເພດ ແລະ ການຍຶດໝັ້ນ ຢ່າງເຂັ້ມງວດຕໍ່ ບົດບາດຍິງຊາຍນັ້ນ - ເຊັ່ນ ຄວາມເຊື່ອທີ່ວ່າ ຜູ້ຊາຍ ຄວນຈະ ເປັນຝ່າຍທີ່ເໜືອກ່ວາຢູ່ໃນ ຄວາມສຳພັນ - ຊຶ່ງອັນນີ້ເປັນ ໜຶ່ງໃນສາຍເຫດຫຼັກ ໃນການເຮັດໃຫ້ເກີດຄວາມຮຸນແຮງ ຕໍ່ ແມ່ຍິງ.

ເຊັ່ນດຽວກັນ ແລະ ທີ່ໜ້າເປັນຫ່ວງແມ່ນ, ບົດລາຍງານຜົນຂອງການສຳຫຼວດ ດັດສະນີ ໝາຍສັງຄົມລາວ ໃນປີ 2012 ໄດ້ພົບວ່າ 58 ເປີເຊັນ ຂອງຜູ້ຍິງ ເຊື່ອວ່າ ມັນຖືກຕ້ອງແລ້ວ ທີ່ ສາມີຄົນໜຶ່ງ ຈະທຸບຕີ ພັນລະຍາຂອງລາວ ຖ້າຫາກວ່າ ນາງ ບົກຜ່ອງ ໃນການດູແລລູກ, ຖຽງກັບລາວ, ປະຕິເສດ ທີ່ຈະມີເພດສຳພັນ ກັບລາວ, ຫຼື ເຮັດອາຫານໄໝ້.

ການປ່ຽນ ຄວາມຄິດ ແລະ ພຶດຕິກຳ ເຫຼົ່ານີ້, ໃນບັນດາ ຜູ້ຊາຍ ແລະ ຜູ້ຍິງ, ແມ່ນເປັນສິ່ງສຳຄັນທີ່ສຸດໃນການແກ້ໄຂບັນຫາດັ່ງກ່າວ.

ໃນໝໍ່ໆນີ້ ປະເທດ ອິດສະຕຣາລີ ໄດ້ເປີດໂຕ *ແຜນປະຕິບັດວຽກງານ: ກ້າວໄປຂ້າງໜ້າ 2013-16 ອັນທີ່ສອງ* ຊຶ່ງ ຊຸມຊົນ ຄົນ ອິດສະຕຣາລີ ໄດ້ຮວມຕົວກັນເພື່ອຫຼຸດຜ່ອນ ລະດັບຄວາມຮຸນແຮງ ທີ່ມີຕໍ່ແມ່ຍິງ ແລະ ເດັກນ້ອຍ.

*ແຜນງານ* ດັ່ງກ່າວ ໄດ້ສົ່ງເສີມ ການປ່ຽນແປງທາງ ດ້ານວັດທະນະທຳ, ເຊິ່ງຊຸກຍູ້ເຮັດໃຫ້ຜູ້ຍິງກ້າ ທີ່ຈະລາຍງານ ປະສົບການຂອງພວກເຂົາ, ແລະ ຈະມີ ຄົນ ອິດສະຕຣາລີ ຈຳນວນຫຼາຍກ່ວາເກົ່າ ທີ່ບໍ່ຍອມຮັບ ຄວາມຮຸນແຮງດັ່ງກ່າວນີ້.

ຄວາມຮຸນແຮງ ຕໍ່ແມ່ຍິງ ເປັນບັນຫາ ທີ່ ມີຜົນກະທົບ ຕໍ່ຜູ້ຍິງ ແລະ ເດັກນ້ອຍ ຢູ່ທົ່ວໂລກ, ປະເທດ ອິດສະຕຣາລີ ຍັງໄດ້ຢືນຢັນເຈດ ຈຳນົງ ທີ່ຈະ ໃຫ້ການສະໜັບສະໜູນ ແລະ ເຮັດວຽກຮ່ວມກັບ ບັນດາປະເທດ ອື່ນໆ ເພື່ອຢຸດຕິ ຄວາມຮູນແຮງ ຕໍ່ແມ່ຍິງ.

ໃນຕົ້ນປີນີ້, ອົດສະຕຣາລີ ໄດ້ເປີດຕົວ ແຜນງານ ສີ່ປີ ທີ່ມີມູນຄ່າ 20 ລ້ານໂດລາອົດສະຕຣາລີ ເພື່ອ ແກ້ໄຂບັນຫາ, ຊອກຫາສາເຫດ ແລະ ຜົນກະທົບ ຂອງຄວາມຮຸນແຮງ ຢູ່ ປະເທດ ຕີມໍ ເລດສເຕ ໂດຍ ການເຮັດວຽກ ເພື່ອປ້ອງກັນ ຄວາມຮຸນແຮງ ແລະ ໃຫ້ການບໍລິການຊ່ວຍເຫຼືອ.

ພວກເຮົາຍັງໄດ້ ປະກອບສ່ວນຊ່ວຍເຫຼືອ ຫຼາຍກ່ວາ 30 ລ້ານໂດລາ ອົດສະຕຣາລີ ເພື່ອຢຸດຕິ ຄວາມຮູນແຮງ ຕໍ່ແມ່ຍິງ ແລະ ເດັກນ້ອຍ ຢູ່ ປະເທດ ປາກິດສະຖານ ແລະ ອັບຟການິດສະຖານ ຕັ້ງແຕ່ ປີ 2013. ງົບປະມານຊ່ວຍເຫຼືອດັ່ງກ່າວນີ້ ໄດ້ໃຫ້ການບໍລິການຊ່ວຍເຫຼືອ ແກ່ ບັນດາ ແມ່ຍິງ ແລະ ລູກຂອງ ພວກເຂົາ, ແລະ ໄດ້ນຳໃຊ້ວິທີສ້າງສັນ ເພື່ອເຮັດໃຫ້ ມີສ່ວນຮ່ວມຂອງຜູ້ ຊາຍ, ຜູ້ຍິງ, ບັນດາຜູ້ນຳ ທາງສາດສະໜາ ແລະ ຜູ້ ນຳຊຸມຊົນ ເພື່ອ ທ້າທາຍແນວຄິດ ແລະ ພຶດຕິກຳ ທີ່ກໍ່ໃຫ້ເກີດ ຄວາມຮູນແຮງ ຕໍ່ແມ່ຍິງ.

ບັນດາໂຄງການ ຂອງ ອົດສະຕຣາລີ ໄດ້ຊີ້ໃຫ້ເຫັນຜົນ ກະທົບຂອງບັນຫານີ້ ຕໍ່ກັບ ການ ພັດທະນາທາງດ້ານເສດຖະກິດ.

ຄວາມຮູນແຮງ ມີຜົນກະທົບຕໍ່ ຜູ້ຍິງ ກ່ອນໝູ່ໝົດ, ມັນຍັງມີຜົນກະທົບຕໍ່ ລູກຂອງພວກເຂົາ, ບັນດາຄອບຄົວ ແລະ ຊຸມຊົນ. ນອກນັ້ນ ມັນຍັງ ມີຜົນກະທົບຕໍ່ເສດຖະກິດແຫ່ງຊາດ, ແລະ ເປັນ ສິ່ງຄຸກຄາມຕໍ່ ການພັດທະນາ ທີ່ຍືນຍົງ ລະດັບຊາດ.

ຄວາມຮູນແຮງ ຕໍ່ແມ່ຍິງແລະ ເດັກຍິງ ໄດ້ສົ່ງຜົນກະທົບອັນໃຫຍ່ຫຼວງໂດຍຕົງຕໍ່ເສດຖະກິດ, ເຊັ່ນ ການສູນເສຍລາຍຮັບ, ຫຼຸດຜ່ອນຜົນຜະລິດ ແລະ ຄວາມທ້າວທັນ ຂອງ ບົດບາດຂອງ ແມ່ຍິງ ແລະ ເດັກຍິງ ທີ່ຈະປະກອບສ່ວນ ເຂົ້າໃນການພັດທະນາ ຊຸມຊົນ ຂອງ ພວກເຂົາກໍ່ຫຼຸດ ລົງ.

ບົດລາຍງານ ປີ 2009 ໄດ້ພົບວ່າ ຄວາມຮຸນແຮງ ຕໍ່ແມ່ຍິງ ແລະ ລູກ ຂອງພວກເຂົາ ໄດ້ເຮັດໃຫ້ ມີຜົນກະທົບຕໍ່ ເສດຖະກິດ ຂອງ ອົດສະຕຣາລີ ປະມານ 13.6 ຕື້ ໂດລາ ອົດສະຕຣາລີ. ຖ້າ ຫາກບໍ່ມີ ການຈັດການ ທີ່ເໝາະສົມ, ຜົນກະທົບ ເຫຼົ່ານີ້ ຈະເພີ່ມຂຶ້ນ ຮອດ 15.6 ຕື້ ໂດລາ ອົດ ສະຕຣາລີ ພາຍໃນປີ 2021-22.

ບັນດາປະເທດ ທີ່ມີການພັດທະນາ ຢ່າງວ່ອງໄວ ແມ່ນບັນດາປະເທດທີ່ ສາມາດແກ້ໄຂ ບັນຫາ ກ່ຽວກັບ ຄວາມບໍ່ສະເໝີພາບລະຫ່ວາງຍິງ ຊາຍ ໄດ້ຢ່າງ ມີ ປະສິດທິພາບ.

ຍ້ອນແນວນັ້ນ ອົດສະຕຣາລີ ຈຶ່ງໄດ້ ເອົາແນວຄິດກ່ຽວກັບຄວາມສະເໝີພາບຍິງຊາຍ ມາປຶກສາ ຫາລື ຢູ່ກອງປະຊຸມ ຈັດຕັ້ງປະຕິບັດໂຕະມົນ ໃນວັນທີ 14  ພະຈິກ ຄິດວ່າ ຄວາມສະເໝີພາບ

ລະຫ່ວາງ ຍິງຊາຍ ຄວນຈະຖືກລວມເຂົ້າໃນ ບັນຫາ ໃຈກາງ ຂອງ ແຜນພັດທະນາເສດຖະກິດ ສັງຄົມ ຄັ້ງທີ່ 8 ຂອງ ສປປ ລາວ.

ການສົ່ງເສີມ ຄວາມສະເໝີພາບ ລະຫ່ວາງ ຍິງຊາຍ, ເພື່ອເຮັດໃຫ້ 50 ເປີເຊັນ ຂອງ ສະຖານທີ່ເຮັດວຽກ ສາມາດເຮັດວຽກໄດ້ເຕັມເມັດເຕັມໜ່ວຍ, ແມ່ນນອນຢູ່ໃນໃຈກາງ ຂອງການທີ່ຈະເຮັດໃຫ້ ສປປ ລາວ ສາມາດ ບັນລຸ ເປົ້າໝາຍພັດທະນາ ສະຫະສະຫວັດ 2015, ແລະ ເປົ້າໝາຍ ທີ່ຈະຫຼຸດພົ້ນອອກຈາກ ປະເທດທີ່ດ້ອຍພັດທະນາ ໃນປີ 2020.

ສິ່ງນີ້ ໄດ້ນຳຂ້າພະເຈົ້າ ມາຂໍຮ້ອງຕໍ່ຜູ້ຊາຍລາວທັງຫຼາຍ.

ຂ້າພະເຈົ້າຍິນດີຕໍ່ ການນຳພາ ຂອງ ລັດຖະບານລາວ ໃນການຮັບຮູ້ວ່າບັນຫານີ້ ເປັນບັນຫາທີ່ສຳຄັນ.

ນາຍົກ ລັດຖະມົນຕີ ຂອງ ປະເທດອົດສະຕຣາລີ, ທ່ານ ໂທນີ້ ອາບອດທ໌, ໄດ້ເປັນແບບຢ່າງ ໂດຍການເປັນທູດຂອງ ໂບສີຂາວ, ເຊິ່ງໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ອົດສະຕຣາລີ ຈະບໍ່ປານີປານອມຕໍ່ບັນຫາ ຄວາມຮຸນແຮງ ຕໍ່ແມ່ຍິງ.

ການນຳພາທີ່ເຂັ້ມແຂງ ນີ້, ເຊິ່ງ ຢູ່ໃນລະດັບຂັ້ນສູງ ຂອງ ລັດຖະບານ, ແມ່ນມີສຳຄັນຫຼາຍໃນການ ຊ່ວຍປ່ຽນແປງ ຄວາມຄິດ. ການສຶກສາ ກໍ່ມີບົດບາດສຳຄັນຫຼາຍ ເຊັ່ນກັນ.

ແຕ່ວ່າມັນແມ່ນຢູ່ໃນລະດັບ ຊຸມຊົນ, ໃນເຄືອຄ່າຍ ຄອບຄົວ ແລະ ໝູ່ເພື່ອນ, ທີ່ ພວກເຮົາໝົດທຸກຄົນ, ເຊັ່ນ ຜູ້ຊາຍ, ສາມີ, ອ້າຍ, ພໍ່, ລຸງ, ຫຼານຊາຍ, ແລະ ພີ່ນ້ອງ, ມີບົດບາດ ສຳຄັນຫຼາຍໃນການເຂົ້າມາມີສ່ວນຮ່ວມ ໃນການປົກປ້ອງ ແມ່ຍິງ - ແລະ ຖ້າເວົ້າ ແບບຊັດເຈນ ແມ່ນຄວາມຮຸນແຮງ ຕໍ່ແມ່ຍິງ ແມ່ນບໍ່ເຄີຍ ເປັນສິ່ງທີ່ຖືກຕ້ອງ.

ແຕ່ລະຄົນ, ຊຸມຊົນ ແລະ ລັດຖະບານ ແມ່ນມີໜ້າທີ່ຮັບຜິດຊອບ ທີ່ຈະອອກມາ ມີສຽງ ເພື່ອຢຸດຕິຄວາມຮຸນແຮງ ຕໍ່ກັບແມ່ຍິງ. ຢູ່ສະຖານທີ່ເຮັດວຽກຂອງພວກເຮົາ, ຢູ່ໂຮງຮຽນ ແລະມະຫາວິທະຍາໄລ ຂອງພວກເຮົາ, ຢູ່ຊຸມຊົນ ແລະ ຢູ່ບ້ານ ຂອງພວກເຮົາ, ພວກເຮົາໝົດທຸກຄົນຄວນຈະ ບອກ ວ່າ “ພໍແລ້ວ”.

ວັນໂບສີຂາວ ມີຄວາມສຳຄັນຫຼາຍ ໃນການຊ່ວຍຂະຫຍາຍ ສຽງຂອງ ຜູ້ຍິງ, ທີ່ຈະເລົ່າ ເລື່ອງສ່ວນຕົວຂອງພວກເຂົາ, ເພື່ອວ່າ ບັນດາຜູ້ຊາຍ ຢູ່ທົ່ວໂລກ ຈະເຂົ້າໃຈ ບັນຫານີ້ ໃນແງ່ມູມຄວາມເປັນມະນຸດ ໃຫ້ຫຼາຍຂຶ້ນ. ເພື່ອເຮັດໃຫ້ຜູ້ຊາຍເຂົ້າໃຈ ວ່າ ການທີ່ເປັນຜູ້ຍິງ ທີ່ດຳລົງຊີວິດ

ດ້ວຍຄວາມຢ້ານ ຕໍ່ ຄວາມຮຸນແຮງ ຢູ່ເຮືອນ, ແລະ ການສູນເສຍ ກຽດສັກສີ ທີ່ພວກເຂົາ ໄດ້ທົນທຸກຈາກການເປັນຜູ້ເຄາະຮ້າຍ ຕໍ່ ຄວາມຮຸນແຮງ ໂດຍມືຂອງ ສາມີ ຫຼື ຄົນຮັກ.

ແຕ່ຜູ້ຍິງ ກໍ່ບໍ່ສາມາດ ເຮັດວຽກນີ້ໂດຍລຳພັງໄດ້. ນີ້ ບໍ່ແມ່ນບັນຫາທີ່ ຜູ້ຍິງ ເຮັດໃຫ້ເກີດຂຶ້ນກັບໂຕຂອງພວກເຂົາເອງ. ສາເຫດ ແລະ ການແກ້ໄຂບັນຫານີ້ ຍັງ ຂຶ້ນກັບຜູ້ຊາຍ ເຊັ່ນກັນ.

ອີລີດສ໌ເບດ ບຣອດຣິກ, ໃນຖານະທີ່ເປັນ ຜູ້ກວດກາ ໃນເລື່ອງການແບ່ງແຍກທາງເພດຂອງປະເທດ ອົດສະຕຣາລີ, ໄດ້ ເວົ້າຢ່າງຈະແຈ້ງວ່າ ມັນແມ່ນການທີ່ ຜູ້ຊາຍ ນຳເອົາຂໍ້ມູນ ດ້ານຄວາມສະເໝີພາບຍິງຊາຍ ບອກຕໍ່ ໃຫ້ແກ່ຜູ້ຊາຍຄົນອື່ນໆ ຈຶ່ງຈະຊ່ວຍ ປ່ຽນແປງ ແນວຄວາມຄິດ ດ້ານຄວາມສະເໝີພາບຍິງຊາຍ ຢູ່ ອົດສະຕຣາລີ, ຢູ່ ສປປ ລາວ ແລະ ຢູ່ທົ່ວໂລກ.

ໃນຖານະທີ່ເປັນພໍ່ ຂອງລູກສາວ ສອງຄົນ, ຂ້າພະເຈົ້າ ມີສ່ວນຮ່ວມ ແລະ ມີຄວາມມຸ່ງໝັ້ນ ທີ່ຈະອອກມາເວົ້າ ກ່ຽວກັບ ຄວາມຮຸນແຮງ ຢູ່ບ້ານ, ແລະ ຂໍຮຽກຮ້ອງ ໃຫ້ບັນດາ ຜູ້ຊາຍໝົດທຸກຄົນໃຫ້ເຮັດເຊັ່ນດຽວກັນ.